# ການສື່ສານໂດຍຜ່ານສິ່ງຂອງ

ນັກຮຽນຫລາຍຄົນທີ່ພິການທັງຫູແລະຕາຕ້ອງການລະບົບການສື່ສານຫລາຍລະບົບ ເພື່ອໃຫ້ສອດຄ້ອງກັບຄວາມຈຳເປັນແລະສະຖານທີ່ທີ່ແຕກຕ່າງກັນ. ການນຳສິ່ງຂອງມາໃຊ້ໃນການສື່ສານ ແມ່ນວິທີທີ່ຜູ້ຮັບສັນຍານສ່ວນຫລາຍເຂົ້າໃຈໄດ້ງ່າຍທັງໃນສະຖານະການທີ່ແປກໃໝ່ຫຣືໃນສະຖານະການທີ່ເຄີຍຊິນແລ້ວ. ລະບົບນີ້ກໍອາດນຳໄປໃຊ້ຮວມກັນກັບພາສາສັນຍານແລະ/ຫຣືຄຳເວົ້າ ເພື່ອໃຫ້ແນ່ນອນວ່າຜູ້ຮັບສັນຍານໄດ້ເຂົ້າໃຈສິ່ງທີ່ປາກຈະບອກ.

ຈຸດປະສົງຂອງການສື່ສານໂດຍຜ່ານສິ່ງຂອງ ແມ່ນອຳນວຍໃຫ້ນັກຮຽນທີ່ພິການທັງຫູແລະຕາມີລະບົບການສື່ອສານທີ່ສາມາດເລືອກໃຊ້ອີກລະບົບນຶ່ງ. ສິ່ງຂອງນັ້ນ ນຳໄປໃຊ້ເພື່ອເປັນເຄື່ອງໝາຍແທນກິຈການ, ສະຖານທີ່ ແລະຜູ້ຄົນຕ່າງ ໆ. ສິ່ງຂອງທີ່ນຳໄປໃຊ້ເຫລົ່ານີ້ ມີທັງແກ່ນສານຕ່າງ ໆ (ເຊັ່ນ ປຽງເສື່ອສາດ, ຜ້າຫົ່ມ, ໄມ້ ຫຣືພລາສຕິກ ເປັນຕົ້ນ), ແບບຈຳລອງ, ຕົວຢ່າງທີ່ຕັດຈາກຂອງຈິງ ແລະສິ່ງຂອງທີ່ເໝືອນກັນກັບສິ່ງທີ່ກຳລັງໃຊ້ຢູ່ຢ່າງໃກ້ຄຽງທີ່ສຸດ. ນັກຮຽນຈະນຳສິ່ງຂອງເຫລົ່ານີ້ໄປໃຊ້ສຳຫຣັບການຮັບຄວາມຮູ້ກ່ຽວກັບກິຈການ, ຜູ້ຄົນ ແລະສະຖານທີ່ທີ່ຢູ່ຮອບ ໆ ເຂົາ ຮວມທັງການຕັດສິນໃຈເລືອກ ແລະ/ຫຣືໃຫ້ຄົນອື່ນເຂົ້າໃຈສິ່ງທີ່ຕົນປາກບອກກັບເຂົາເຈົ້າ.

*ຂໍ້ຄວນຈຳຈື່ໄວ້*

1. ນັກຮຽນ, ຄອບຄົວ ແລະຄູຈຳເປັນຕ້ອງຮ່ວມມືກັນທຳງານ ເພື່ອຈະເລືອກສິ່ງຂອງທີ່ຈະມີຄວາມໝາຍໄດ້ຫລາຍທີ່ສຸດແລະສອດຄ້ອງກັບຄວາມຕ້ອງການຂອງນັກຮຽນຜູ້ນັ້ນໄດ້ດີທີ່ສຸດ.

2. ຕາມເວລາທີ່ຜ່ານໄປ, ຈະສາມາດເພີ່ມຈຳນວນສິ່ງຂອງທີ່ນຳໄປໃຊ້ເປັນເຄື່ອງໝາຍແທນກິຈການປະຈຳວັນຕ່າງ ໆ ຂອງນັກຮຽນ. ຫາກນັກຮຽນເຂົ້າໃຈວ່າ ສິ່ງຂອງເຫລົ່ານັ້ນເປັນເຄື່ອງໝາຍແທນສິ່ງໃດສິ່ງນຶ່ງທີ່ກຳລັງຈະເກີດຂຶ້ນ ຈຶ່ງສາມາດເພີ່ມຈຳນວນສິ່ງທີ່ນຳໄປໃຊ້ໄດ້.

3. ການນຳສິ່ງຂອງໄປໃຊ້ນັ້ນ ອາດເຣີ່ມຕົ້ນໄດ້ດ້ວຍຈຸດປະສົງທີ່ຈະໃຫ້ນັກຮຽນໄດ້ຮັບຄວາມຮູ້ກ່ຽວກັບກິຈການ, ຜູ້ຄົນ ແລະສະຖານທີ່ຕ່າງ ໆ. ໃນຣະຍະຕໍ່ໄປ ຈະສາມາດນຳສິ່ງຂອງຕ່າງ ໆ ມາສະແດງຕໍ່ນັກຮຽນ ເພື່ອຊາບໄດ້ວ່າ ກິຈການ, ຜູ້ຄົນ ຫຣືສະຖານທີ່ໃດບ້າງທີ່ນັກຮຽນມັກຫລາຍກວ່າກັນ. ການເລືອກນັ້ນ ອາດທຳໄດ້ດ້ວຍການຂຍັບມື, ການເໜັ່ງຕຶງຂອງຮ່າງກາຍ ຫຣືການທຳສີໜ້າ (ຕົວຢ່າງເຊັ່ນ ຫາກນັກຮຽນຖິ້ມສິ່ງໃດສິ່ງນຶ່ງລົງພື້ນ ທັງ ໆ ທີ່ໃຫ້ຄົນນັ້ນຍັງຄົງຢູ່ຕໍ່ໜ້າເຂົາຕໍ່ໄປ, ເຂົາອາຈພະຍາຍາມບອກກັບທ່ານວ່າ ເຂົ້າໄດ້ເລືອກເອົາສິ່ງທີວາງຢູ່ເທິງໂຕະ.

ຄຳແຈ້ງຂໍ້ມູນຈາກ California Deaf-Blind Services (ໜ່ວຍບໍຣິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລິຟໍນີ ຫຣື CDBS) ເຫລົ່ານີ້ ຈັດທຳເພື່ອທີ່ຈະນຳໄປໃຊ້ປະໂຍດໄດ້ທັງໂດຍຄອບຄົວແລະໂດຍຜູ້ປະກອບອາຊີບທີ່ຮັບໃຊ້ບໍຣິການຜູ້ທີ່ພິການທັງຫູທັງຕາ. ຂໍ້ມູນດັ່ງກ່າວໃຊ້ໄດ້ກັບນັກສຶກສາຕັ້ງແຕ່ເກີດມາຈົນເຖິງໄດ້ຄົບອາຍຸ 22 ປີບໍຣິບູນ. ວັຕຖຸປະສົງຂອງຄຳແຈ້ງຂໍ້ມູນແຕ່ລະສະບັບ ແມ່ນໃຫ້ຄວາມຮູ້ໂດຍທົ່ວໄປໃນເຣື່ອງໃດເຣື່ອງນຶ່ງຢ່າງເຈາະຈົງ. ນັກສຶກສາແຕ່ລະທ່ານ ສາມາດຂໍທາບລາຍລະອຽດເພີ່ມເຕີມໄດ້ໂດຍຜ່ານການຊ່ວຍເຫລືອທາງວິທຍາການສະເພາະລາຍທີ່ໃຫ້ໂດຍ CDBS. ຄຳແຈ້ງຂໍ້ມູນນີ້ ຈຶ່ງນັບເປັນຈຸດເຣີ່ມຕົ້ນສຳຫຣັບການໄດ້ຮັບຊາບລາຍລະອຽດຕໍ່ໄປ.

4. ຄວນສນັບສນຸນນັກຣຽນໃຫ້ຮູ້ຈັກໃຊ້ຄຳເວົ້າຫຣືສັນຍານນອກຈາກການໃຊ້ສິ່ງຂອງເຫລົ່ານັ້ນ ຫາກມີທັກສະທາງດ້ານນັ້ນ.

5. ສິ່ງຂອງຕ່າງ ໆ ສາມາດໃຊ້ກັບນັກຣຽນໄດ້ດ້ວຍຫລາຍວິທີ ເຊັ່ນ ກ່ອງປະຕິທິນປະຈຳວັນ, ຣະບົບທີ່ສາມາດຖືໄດ້ ຫຣືທັງສອງຢ່າງພ້ອມກັນ.

*ວິທີໃຊ້ກ່ອງປະຕິທິນປະຈຳວັນ*

1. ກ່ອນນັກຣຽນມາໂຮງຮຽນຈະເອົາສິ່ງຂອງຕ່າງ ໆ ມາໃສ່ໃນກ່ອງ, ຕາມອັນດັບຂອງກິຈການທີ່ຈະທຳໃນວັນນັ້ນ.

2. ພານັກຣຽນມາເຖິງກ່ອງແລ້ວໃຫ້ເຂົາດູຫຣືຄຳສິ່ງຂອງທີ່ຢູ່ໃນກ່ອງໝົດທຸກໜ່ວຍ. ຜູ້ໃຫຍ່ຈະຕັ້ງຊື່ໃຫ້ສິ່ງຂອງຫຣືກິຈການແຕ່ລະຢ່າງໂດຍໃຊ້ຄຳເວົ້າຫຣືສັນຍາໃນຂະນະທີ່ນັກຣຽນກຳລັງກວດເບິ່ງສິ່ງຂອງນັ້ນ. ຫາກນັກຫຽນບໍ່ມັກໃຫ້ສິ່ງໃດເຂົ້າມາສັມຜັດກັບມື, ກໍຄວນວາງສິ່ງຂອງນັ້ນເທິງອີກສ່ວນນຶ່ງຂອງຮ່າງກາຍຂອງນັກຣຽນ (ເຊັ່ນ ຂໍ່ສອກ ຫຣືບ່າ) ເຊິ່ງມີຄວາມໄວຕໍ່ການສັມຜັດທີ່ນ້ອຍກວ່າ.

3. ຫລັງຈາກໄດ້ກວດເບິ່ງສິ່ງຂອງແຕ່ລະໜ່ວຍຕາມອັນດັບແລ້ວ, ນັກຣຽນຈະກັບໄປເອົາສິ່ງຂອງອອກຈາກກ່ອງອັນດັບທີ່ນຶ່ງແລ້ວໄປທຳກິຈການນັ້ນກັບສິ່ງຂອງນັ້ນ.

4. ເມື່ອເຖິງບ່ອນທີ່ທຳກິຈການນັ້ນ, ນັກຣຽນໃຫ້ສິ່ງຂອງນັ້ນເຂົ້າກັບກິຈການ. ເຂົາຈະເຫັນຫຣືຮູ້ສຶກວ່າສິ່ງຂອງນັ້ນ ແມ່ນສ່ວນນຶ່ງຂອງກິຈການນັ້ນຢູ່ສເມີ (ເຊັ່ນ ບ່ວງໃນເວລາກິນເຂົ້າ, ຜ້າຫົ່ມໃນຂະນະນອນຫລັບ, ລູກບານໃນຂະນະອອກກຳລັງກາຍເປັນຕົ້ນ). ເນື່ອງຈາກສິ່ງຂອງແລະກິຈການໃດ ໆ ລ້ວນແຕ່ມາພ້ອມກັນທຸກເທື່ອ, ນັກຣຽນຈະເຣີ່ມຄາດໝາຍກິຈການນັ້ນເມື່ອເຂົາຖືສິ່ງຂອງນັ້ນຢູ່ໃນອູ້ງມື.

5. ເມື່ອກິຈການຈະສິ້ນສຸດລົງໄປ, ນັກຣຽນຈະກັບໄປຍັງແຖວກ່ອງ ແລ້ວວາງສິ່ງຂອງນັ້ນລົງໃນກ່ອງອີກອັນນຶ່ງຕ່າງຫາກທີ່ໃຊ້ສຳຫຣັບກິຈການທີ່ທຳເສັດແລ້ວ ຫຣືວາງສິ່ງຂອງນັ້ນລົງໃນກ່ອງເດີມແລ້ວໃສ່ຝາປິດ. ຜູ້ໃຫຍ່ຈະຕັ້ງຊື່ກ່ອງນັ້ນ, ສິ່ງນັ້ນ ຫຣືກິຈການນັ້ນວ່າເປັນອັນ "ເສັດແລ້ວ" ໂດຍໃຊ້ຄຳເວົ້າຫຣືສັນຍາບ.

6. ໃຫ້ຍ້າຍໄປຍັງກັບອັນດ່ອງຕໍ່ໄປ ແລະປະຕິບັດຕາມຂັ້ນຕອນເດີມ.

*ຣະບົບຕ່າງ ໆ ທີ່ສາມາດຖືໄດ້ເພື່ອນຳໄປໃຊ້ໃນສັງຄົມ*

ເມື່ອຕ້ອງການໃຊ້ຣະບົບທີ່ສາມາດຖືໄດ້, ນັກຣຽນຈະສາມາດໃຊ້ສິ່ງຂອງໃນທຳນອງດຽວກັນໄດ້ ເມື່ອໄປຮ່ວມສັງຄົມພາຍນອກ. ນັກຣຽນສາມາດໃຊ້ສິ່ງອື່ນແທນກ່ອງໄດ້ ອາທິເຊັ່ນ ກະເປົາເງິນ, ຖົງແຂວນສະໂພກ ຫຣືຖົງແບກຫລັງ ເປັນຕົ້ນ.

*ຊັພຍາກອນຕ່າງ ໆ*

1. **American Printing House for the Blind**
(ໂຮງພິມອະເມຣິກັນສຳຫຣັບຄົນຕາບອດ)
**1839 Frankfort Ave. • P.O. Box 6085**
**Louisville, KY 40206-0085**
**(502) 895-2405**